# ມະຕິ
## ກອງປະຊຸມຄົບຄະນະ
## ຂອງຄະນະບໍລິຫານງານສູນກາງພັກ ຄັ້ງທີ 4 ສະໄໝທີ XI

---

ຄະນະບໍລິຫານງານສູນກາງພັກ ສະໄໝທີ XI ໄດ້ດຳເນີນກອງປະຊຸມຄົບຄະນະ ຄັ້ງທີ 4 ແຕ່ວັນທີ 18-26 ພຶດສະພາ 2022 ທີ່ສຳນັກງານສູນກາງພັກປະຊາຊົນປະຕິວັດລາວ, ພາຍໃຕ້ການເປັນປະທານ ຂອງ ສະຫາຍ ທອງລຸນ ສີສຸລິດ, ເລຂາທິການໃຫຍ່ ຄະນະບໍລິຫານງານສູນກາງພັກປະຊາຊົນ ປະຕິວັດລາວ.

ກອງປະຊຸມ ໄດ້ຄົ້ນຄວ້າ, ປຶກສາຫາລື ແລະ ໃຫ້ທິດຊີ້ນຳ ຕໍ່ບັນຫາສຳຄັນ ດັ່ງນີ້:

**1. ກອງປະຊຸມ ໄດ້ປະເມີນສະພາບແວດລ້ອມຢູ່ພາກພື້ນ ແລະ ສາກົນໃນປະຈຸບັນ ແລະ ຄາດຄະເນທ່າຂະຫຍາຍໃນຕໍ່ໜ້າ** ໂດຍເຫັນເປັນເອກະພາບກັນວ່າ ສະພາບການຂອງໂລກ ຍັງຕົກຢູ່ໃນພາວະເຄັ່ງຕຶງ ແລະ ມີຄວາມສັບສົນຕໍ່ເນື່ອງ ອັນເກີດຈາກຄວາມຂັດແຍ່ງ ແລະ ການປະເຊີນໜ້າໂດຍກົງ, ຂ້ຽວຂາດ ລະຫວ່າງປະເທດມະຫາອຳນາດ; ບັນຫາທີ່ເກີດຂຶ້ນ ລະຫວ່າງ ລັດເຊຍ ແລະ ອູແກຣນ ໄດ້ສ້າງຜົນກະທົບຕໍ່ເສດຖະກິດທົ່ວໂລກ, ສ້າງຄວາມປ່ຽນແປງຄັ້ງໃຫຍ່ດ້ານພູມີລັດຖະສາດ, ມີຄວາມສ່ຽງທີ່ຈະຂະຫຍາຍສູ່ສົງຄາມ ລະຫວ່າງປະເທດ, ການແຜ່ລະບາດ ຂອງພະຍາດໂຄວິດ-19 ເຖິງວ່າມີທ່າອ່ຽງຫຼຸດລົງຈະແຈ້ງ ແລະ ຫຼາຍປະເທດເລີ່ມປະຕິບັດມາດຕະການເປີດປະເທດທາງເສດຖະກິດ ແຕ່ຍັງຂາດຄວາມແນ່ນອນ, ການແກ້ໄຂຜົນກະທົບ ກໍ່ຍັງເປັນສິ່ງທ້າທາຍໃຫຍ່ຫຼວງ. ຕໍ່ໜ້າສະພາບການດັ່ງກ່າວ, ສູນກາງພັກ ເຫັນວ່າ ຕ້ອງມີຄວາມສະດຸ້ງໄວ ຕໍ່ສະຖານະການ ທັງຕ້ອງມີຈຸດຢືນທີ່ໜັກແໜ້ນ, ຮູ້ແກ້ໄຂບັນຫາດ້ວຍຄວາມຄ່ອງແຄ້ວ, ມີສະຕິ ແລະ ຢືນຢູ່ບົນຫຼັກການ ຂອງແນວທາງ, ນະໂຍບາຍການຕ່າງປະເທດ ຂອງພັກ ແລະ ລັດເຮົາ.

ກອງປະຊຸມ ໄດ້ຊີ້ນຳລັດຖະບານ, ຄະນະພັກ, ອົງການປົກຄອງແຕ່ລະຂັ້ນ ເພີ່ມທະວີສະຕິລະວັງຕົວ, ຕິດຕາມ, ກຳແໜ້ນ ສະພາບການພັນແປຢູ່ໃນພາກພື້ນ ແລະ ສາກົນ ເພື່ອນຳພາແນວຄິດ ແລະ ເປັນເຈົ້າການປະຕິບັດບັນດາມາດຕະການຮັບມື, ແກ້ໄຂຜົນກະທົບ ຕໍ່ປະເທດເຮົາ ໃຫ້ທັນການ.

**2. ກ່ຽວກັບການຕີລາຄາຜົນການຈັດຕັ້ງປະຕິບັດ ແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານ ແລະ ແຜນເງິນຕາ ຕົ້ນປີ 2022 ຕິດພັນກັບຜົນການຈັດຕັ້ງປະຕິບັດ 2 ວາລະແຫ່ງຊາດ**, ຄະນະບໍລິຫານງານສູນກາງພັກ ຕີລາຄາສູງ ຕໍ່ລັດຖະບານ ທີ່ໄດ້ມີຄວາມພະຍາຍາມ ແລະເອົາໃຈໃສ່ຊີ້ນຳການຈັດຕັ້ງປະຕິບັດແຜນດັ່ງກ່າວ, ສາມາດຮັບປະກັນສະຖຽນລະພາບ ຂອງເສດຖະກິດມະຫາພາກ, ສັງຄົມ ມີຄວາມສະຫງົບ ແລະ ເປັນລະບຽບຮຽບຮ້ອຍໂດຍພື້ນຖານ, ໃນສາມເດືອນຕົ້ນປີ ການພັດທະນາເສດຖະກິດ-ສັງຄົມ ສືບຕໍ່ຂະຫຍາຍຕົວຕໍ່ເນື່ອງ; ການແກ້ໄຂການລະບາດ ຂອງພະຍາດໂຄວິດ-19 ໄດ້ເຮັດຢ່າງຕັ້ງໜ້າ ແລະ ສາມາດຮັບມື, ປ້ອງກັນ, ຄວບຄຸມ ແລະ ແກ້ໄຂດ້ວຍຫຼາຍມາດຕະການ ບໍ່ໃຫ້ແຜ່ລາມອອກເປັນວົງກວ້າງ ແລະ ໄດ້ດັດປັບການໃຊ້ຊີວິດສັງຄົມ ຕາມວິຖີຊີວິດແບບໃໝ່.

ເຖິງຢ່າງໃດກໍ່ຕາມ ກອງປະຊຸມ ໄດ້ເປັນເອກະພາບຕໍ່ສິ່ງທ້າທາຍ ແລະ ຄວາມຫຍຸ້ງຍາກ ໃນການພັດທະນາເສດຖະກິດ-ສັງຄົມ ຂອງປະເທດເຮົາ ເຊິ່ງມີພື້ນຖານເສດຖະກິດ ທີ່ອ່ອນນ້ອຍ, ບອບບາງຢູ່ແລ້ວນັ້ນ ຍັງໄດ້ຮັບຜົນກະທົບຈາກການພັນແປ ຂອງເສດຖະກິດ-ການເງິນໂລກ ທີ່ປະເຊີນໜ້າກັບບັນຫານ້ຳມັນເຊື້ອໄຟ, ເງິນເຟີ້, ບັນຫາການແລກປ່ຽນເງິນຕາຕ່າງປະເທດ, ລາຄາສິນຄ້າ ແລະ ຄ່າຄອງຊີບ... ທີ່ກະທົບຕໍ່ການຜະລິດ, ທຸລະກິດ ກໍ່ຄືກະທົບໂດຍກົງຕໍ່ຊີວິດການເປັນຢູ່ ຂອງພະນັກງານ, ທະຫານ, ຕຳຫຼວດ ແລະ ປະຊາຊົນບັນດາເຜົ່າ; ການປະຕິບັດຄາດໝາຍແຜນປີ 2022 ໃນບາງດ້ານອາດຈະບໍ່ບັນລຸຕາມຄາດໝາຍ ເປັນຕົ້ນແຜນລາຍຮັບ-ລາຍຈ່າຍ ງົບປະມານ, ການແກ້ໄຂບັນຫາໜີ້ສິນ ຍັງມີລັກສະນະຕາບຈູນ, ໃນຂະນະດຽວກັນ ຄວາມສະດຸ້ງຕໍ່ສະພາບທີ່ເກີດຂຶ້ນ, ແຜນຮັບມືຜົນກະທົບຈາກພາຍນອກ ກໍ່ຄືສະພາບການພັນແປຕ່າງໆ ບໍ່ທັນເປັນລະບົບ ແລະ ບໍ່ແທດກັບຕົວຈິງ; ບັນຫາຢາເສບຕິດ ເຖິງວ່າໄດ້ມີຄວາມພະຍາຍາມແກ້ໄຂ ແລະ ໄດ້ຮັບຜົນສຳເລັດໃນການປາບປາມແກ້ໄຂ ຢູ່ຫຼາຍທ້ອງຖິ່ນ ແຕ່ກໍ່ບໍ່ທັນຫຼຸດລົງຢ່າງຈະແຈ້ງ ແລະ ສ້າງການຫັນປ່ຽນອັນເລິກເຊິ່ງ ຈາກຮາກຖານປະຊາຊົນ ໂດຍສະເພາະແຜນການແກ້ໄຂຜົນຮ້າຍ ຈາກການຕິດຢາເສບຕິດ ບໍ່ທັນແຂງແຮງ, ເຖິງຖອງ; ການແກ້ໄຂວຽກເຮັດງານທຳ ກໍ່ຍັງບໍ່ທັນເປັນລະບົບ ແລະ ຕິດພັນກັບການສ້າງອາຊີບອັນໝັ້ນຄົງ ແຕ່ຫົວໜ່ວຍຄອບຄົວຂຶ້ນມາ; ການປະຕິບັດຫຼັກການ, ກົດໝາຍ ແລະ ລະບຽບການ ກໍ່ຄືຄວາມເປັນເຈົ້າ ຂອງຂະແໜງການ ແລະ ທ້ອງຖິ່ນ ຈຳນວນໜຶ່ງ ບໍ່ທັນສູງ ແລະ ເຂັ້ມງວດ.

ກອງປະຊຸມ ໄດ້ໃຫ້ທັດສະນະວ່າ: ໃນຕໍ່ໜ້ານີ້ ປະເທດເຮົາ ຍັງຈະສືບຕໍ່ປະເຊີນໜ້າກັບສະພາບຄວາມຫຍຸ້ງຍາກ ແລະ ສິ່ງທ້າທາຍທົດສອບ, ຄວາມຫຼໍ່ແຫຼມຫຼາຍປະການ ທີ່ຈະສືບຕໍ່ສົ່ງຜົນກະທົບ ຕໍ່ສະຖຽນລະພາບເສດຖະກິດ-ສັງຄົມ. ສູນກາງພັກ ໃນດ້ານຫຼັກການ ແມ່ນເຫັນດີຕໍ່ກັບທິດທາງ, ມາດຕະການ ໃນການຈັດຕັ້ງປະຕິບັດ ແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານ ແລະ ແຜນເງິນຕາ ໄລຍະທ້າຍປີ 2022 ຕິດພັນກັບການປະຕິບັດ 2 ວາລະແຫ່ງຊາດ, ແຕ່ໄດ້ເນັ້ນໜັກ ແລະ ໃຫ້ທິດຊີ້ນຳຕື່ມບາງບັນຫາ ດັ່ງນີ້:

- ສູ້ຊົນໃຫ້ຮັບປະກັນສະຖຽນລະພາບ ທາງດ້ານເສດຖະກິດ, ການເງິນ-ເງິນຕາ ມີຄວາມໝັ້ນທ່ຽງ, ເດັດຂາດ ບໍ່ໃຫ້ຕົກເຂົ້າສູ່ວິກິດການ ແລະ ມີຄວາມສາມາດ ໃນການສືບຕໍ່ພັດທະນາ ຕາມທິດທີ່ກອງປະຊຸມໃຫຍ່ ຄັ້ງທີ XI ຂອງພັກ ກຳນົດໄວ້, ຮັບປະກັນການດຳລົງຊີວິດ ຂອງປະຊາຊົນ ໃຫ້ໄດ້ຮັບການຍົກລະດັບດີຂຶ້ນ; ສືບຕໍ່ຍູ້ແຮງການດຶງດູດເອົາການລົງທຶນຈາກກາລະໂອກາດ ທີ່ເອື້ອອຳນວຍ ແລະ ທ່າແຮງ ກໍ່ຄືຄວາມສາມາດບົ່ມຊ້ອນຕ່າງໆ (ເສັ້ນທາງລົດໄຟຄວາມໄວສູງ, ການເຊື່ອມຈອດດ້ານໂຄງລ່າງເສດຖະກິດ, ການຜະລິດກະສິກຳສະອາດ...) ເພື່ອສ້າງໃຫ້ມີລາຍຮັບ, ມີທຶນຮອນ ໃນການແກ້ໄຂບັນຫາຫຍຸ້ງຍາກດ້ານເສດຖະກິດ-ການເງິນ ແລະ ຍົກລະດັບລາຍຮັບຕົວຈິງ ໃຫ້ແກ່ປະຊາຊົນ;

- ມອບໃຫ້ລັດຖະບານ ເພີ່ມທະວີຄວາມຮັບຜິດຊອບ ແລະ ຄວາມເປັນເຈົ້າການ ໃນການຊີ້ນຳບັນຊາຂະແໜງການ ແລະ ທ້ອງຖິ່ນ ໂດຍໃຫ້ສຸມໃສ່ແກ້ໄຂບັນຫາທີ່ຄົງຄ້າງ ແລະ ແກ່ຍາວມາດົນນານ ໃຫ້ຕົກໄປຢ່າງຂາດຕົວ; ໃນນັ້ນ ບັນຫາຮີບດ່ວນ ແມ່ນໃຫ້ສືບຕໍ່ແກ້ໄຂການຂາດແຄນເງິນຕາຕ່າງປະເທດ, ຄວບຄຸມ-ຄຸ້ມຄອງອັດຕາແລກປ່ຽນ, ອັດຕາເງິນເຟີ້ ບໍ່ໃຫ້

ໝັ້ງຕົງແຮງ, ແກ້ໄຂການຂາດແຄນນ້ຳມັນເຊື້ອໄຟ, ຕິດພັນກັບການຄົ້ນຄວ້າມາດຕະການ ເພື່ອຫຼຸດຜ່ອນຄວາມຫຍຸ້ງຍາກດ້ານຄ່າຄອງຊີບ; ບໍລິຫານ-ຈັດການ ໜີ້ສິນພາກລັດ ໃຫ້ເປັນລະບົບກວ່າເກົ່າ ດ້ວຍມາດຕະການຈຳນວນໜຶ່ງຄື:ປັບປຸງການນຳພາຊີ້ນຳ ຂອງຂະແໜງການທີ່ມີໜ້າທີ່ຄຸ້ມຄອງ ກ່ຽວກັບການເງິນ-ເງິນຕາ, ເພີ່ມທະວີມາດຕະການຄຸ້ມຄອງຮ້ານແລກປ່ຽນ, ຫຼູ້ເຄື່ອນໄຫວແລກປ່ຽນເງິນຕາ, ກວດກາບໍລິມາດເງິນຕາຕົວຈິງ ທີ່ຈໍລະຈອນຢູ່ໃນລະບົບທະນາຄານ ແລະ ໃນສັງຄົມ. ພ້ອມທັງປະຕິບັດມາດຕະການເດັດຂາດ ຕໍ່ຜູ້ລະເມີດລະບຽບກົດໝາຍ; ຮີບຮ້ອນປັບປຸງ ແລະວາງນະໂຍບາຍດຶງເງິນຕາເຂົ້າລະບົບທະນາຄານ ດ້ວຍມາດຕະການປັບຂຶ້ນອັດຕາດອກເບ້ຍເງິນຝາກ ໃຫ້ຄ່ອງຕົວກວ່າເກົ່າ, ເພີ່ມການປ່ອຍສິນເຊື່ອເງິນກີບ ແຕ່ຄວບຄຸມການປ່ອຍເງິນຕາ ໃຫ້ເຂັ້ມງວດ ໄປພ້ອມກັບການຄວບຄຸມ, ຄຸ້ມຄອງລາຄາສິນຄ້າ ບໍ່ໃຫ້ກະທົບແຮງຕໍ່ການດຳລົງຊີວິດຂອງປະຊາຊົນ, ພະນັກງານ, ທະຫານ, ຕຳຫຼວດ; ສືບຕໍ່ຊີ້ນຳການຫັນເປັນທັນສະໄໝ ໃນການຈັດເກັບລາຍຮັບ, ຄຸ້ມຄອງລາຍຈ່າຍ ງົບປະມານໃຫ້ເປັນລະບົບ, ໂປ່ງໃສ; ເພີ່ມທະວີມາດຕະການປະຢັດ ໂດຍສະເພາະ ການໃຊ້ຈ່າຍບໍລິຫານພາກລັດ, ການຈັດງານຕ່າງໆ, ປະຕິບັດວິໄນເດັດຂາດ ຕໍ່ຜູ້ລະເມີດລະບຽບ, ວິໄນ ການເງິນ;

ເອົາໃຈໃສ່ແກ້ໄຂຂອດອັດຕັນ ຂອງການລົງທຶນ ເພື່ອສ້າງສະພາບແວດລ້ອມທີ່ເອື້ອອຳນວຍໃຫ້ແກ່ການຊຸກຍູ້, ສົ່ງເສີມ, ດຶງດູດເອົາທຶນຮອນ ໂດຍສຸມໃສ່ບັນດາໂຄງການລົງທຶນໃຫຍ່ໆ ທີ່ໄດ້ອະນຸມັດແລ້ວ ໃຫ້ສາມາດດຳເນີນການໄດ້ໄວ ເພື່ອດຶງເງິນຕາເຂົ້າປະເທດ ຢ່າງເປັນລະບົບ ຕາມກົດໝາຍ, ພ້ອມກັນນັ້ນ ກໍ່ລະດົມເງິນຕາ ໃນທົ່ວສັງຄົມ ເພື່ອແກ້ໄຂບັນຫາຫຍຸ້ງຍາກ ຂອງປະເທດຊາດ; ສືບຕໍ່ເຈລະຈາກັບປະເທດຄູ່ຄ້າ ເພື່ອຫັນໄປສູ່ການຊຳລະ ດ້ວຍເງິນຕາສະກຸນທ້ອງຖິ່ນ ຂອງແຕ່ລະຝ່າຍ ກໍ່ຄືສະກຸນອື່ນໆ ຕາມຄວາມເໝາະສົມ; ພ້ອມກັນນັ້ນກໍ່ຕ້ອງດຳເນີນມາດຕະການຊຳລະສະສາງຕາມກົດໝາຍ ແລະ ລະບຽບການຂອງ ສປປ ລາວ;

ຄຸ້ມຄອງ, ດັດສົມ ບັນດາບໍລິສັດນຳເຂົ້ານ້ຳມັນເຊື້ອໄຟ ເພື່ອໃຫ້ເຂັ້ມແຂງ ແລະ ເປັນຫຼັກແຫຼ່ງ ຮັບປະກັນການບໍລິການສັງຄົມ ທີ່ມີຄຸນນະພາບ ທັງຮັບປະກັນຄວາມໝັ້ນຄົງດ້ານນ້ຳມັນເຊື້ອໄຟ ໃນຂອບເຂດທົ່ວປະເທດ ໂດຍແມ່ນວິສາຫະກິດ ຂອງລັດ ເປັນໃຈກາງ. ພ້ອມກັນນັ້ນ ກໍ່ສົ່ງເສີມ ແລະ ຊຸກຍູ້ການນຳໃຊ້ພາຫະນະທີ່ໃຊ້ພະລັງງານທາງເລືອກອື່ນ ໃຫ້ຫຼາຍຂຶ້ນເຊັ່ນ: ລົດໄຟຟ້າ, ປັບປຸງການບໍລິການໂດຍສານສາທາລະນະ...

- ເພີ່ມທະວີການຊີ້ນຳ ວາງມາດຕະການຮອງຮັບການເປີດປະເທດ ໃນເງື່ອນໄຂຍັງມີການລະບາດ ຂອງພະຍາດໂຄວິດ-19 ຢ່າງຄ່ອງແຄ່ວ ແລະ ຮັດກຸມ ເປັນຕົ້ນ ມາດຕະການດ້ານສາທາລະນະສຸກ, ເລັ່ງລັດການສັກຢາວັກແຊັງ ໃຫ້ກວ້າງຂວາງ, ທົ່ວເຖິງ; ເອົາໃຈໃສ່ຄຸ້ມຄອງດ່ານທ້ອງຖິ່ນ ແລະ ດ່ານປະເພນີ ໃຫ້ເຂັ້ມງວດຂຶ້ນຕື່ມ; ເອົາໃຈໃສ່ແກ້ໄຂບັນຫາວ່າງງານ, ສ້າງວຽກເຮັດງານທຳ ໃຫ້ກຳລັງແຮງງານທີ່ມີຢູ່ພາຍໃນ ໃຫ້ໄດ້ຫຼາຍທີ່ສຸດ; ສືບຕໍ່ແກ້ໄຂບັນຫາຢາເສບຕິດ, ໄພຫຍໍ້ທໍ້ຕ່າງໆທາງສັງຄົມ ຢ່າງຈິງຈັງ, ແທດເຖິງກວ່າເກົ່າ ຕາມທີ່ກຳນົດໄວ້ໃນວາລະແຫ່ງຊາດ ວ່າດ້ວຍການແກ້ໄຂບັນຫາຢາເສບຕິດ;

ຄະນະບໍລິຫານງານສູນກາງພັກ ມອບໃຫ້ລັດຖະບານສືບຕໍ່ປັບປຸງແຜນການດັ່ງກ່າວ ໃຫ້ຮັດກຸມ, ຈະແຈ້ງ, ຄົບຖ້ວນ ແລະ ປະສານສົມທົບກັບຄະນະປະຈຳສະພາແຫ່ງຊາດ ກວດກາຄືນບັນດາຄາດໝາຍສູ້ຊົນ ກໍ່ຄືຄວາມສາມາດໃນການຈັດຕັ້ງປະຕິບັດ ແຜນພັດທະນາເສດຖະ

ກິດ-ສັງຄົມ, ແຜນງົບປະມານ-ເງິນຕາ ເພື່ອເອກະພາບກັນ ແລະ ນຳສະເໜີ ຕໍ່ກອງປະຊຸມສະໄໝສາມັນ ເທື່ອທີ 3 ຂອງສະພາແຫ່ງຊາດ ພິຈາລະນາຮັບຮອງເອົາ.

**3. ສືບຕໍ່ຍູ້ແຮງການຈັດຕັ້ງປະຕິບັດ ມະຕິກອງປະຊຸມໃຫຍ່ ຄັ້ງທີ XI ຂອງພັກ ໃຫ້ປະກົດຜົນເປັນຈິງ, ຄະນະບໍລິຫານງານສູນກາງພັກ ໄດ້ປຶກສາຫາລື ແລະ ໃຫ້ທິດຊີ້ນຳ ກ່ຽວກັບການເສີມຂະຫຍາຍທ່າແຮງ, ຄວາມສາມາດບົ່ມຊ້ອນ ໃຫ້ກາຍເປັນຂະແໜງເສດຖະກິດປາຍແຫຼມ** ເຊິ່ງເປັນແຜນນະໂຍບາຍ ທີ່ມີລັກສະນະຍຸດທະສາດ ໃນການປັບປຸງ ແລະ ພັດທະນາໂຄງປະກອບເສດຖະກິດຕາມຂະແໜງການ ແລະ ເຂດແຄວ້ນ ຢູ່ປະເທດເຮົາ, ຮັບປະກັນການນຳໃຊ້ຊັບພະຍາກອນທຳມະຊາດ, ທ່າແຮງ, ຄວາມອາດສາມາດບົ່ມຊ້ອນ ທີ່ປະເທດເຮົາມີຢ່າງຄຸ້ມຄ່າ ໂດຍມີການວາງແຜນຍຸດທະສາດພັດທະນາຂະແໜງການທີ່ມີທ່າແຮງ ແລະ ໄດ້ປຽບ ໃຫ້ສາມາດສ້າງຄວາມເຂັ້ມແຂງ ແລະ ຄວາມຮັ່ງມີ, ກາຍເປັນແຫຼ່ງລາຍຮັບ (ຊັບສິນ) ທີ່ມີຈຸດສຸມ, ມີປະສິດທິພາບ, ເປັນເຈົ້າຕົນເອງ ໃນການພັດທະນາ ແລະ ມີຄວາມຍືນຍົງ;

ກອງປະຊຸມ ໄດ້ຊີ້ນຳໃຫ້ລັດຖະບານ ສືບຕໍ່ຄົ້ນຄວ້າ ກ່ຽວກັບນິຍາມ ຫຼື ຄວາມສຳນຶກ ກ່ຽວກັບຂະແໜງເສດຖະກິດປາຍແຫຼມ ຫຼື ຂະແໜງການພັດທະນາບູລິມະສິດ ໃຫ້ມີຄວາມຈະແຈ້ງຂຶ້ນຕື່ມ ເພື່ອອອກນະໂຍບາຍ ດຳເນີນການໃນຂັ້ນຕອນຕໍ່ໄປ ພ້ອມກັນນັ້ນ ກໍ່ໄດ້ຢືນຢັນທິດການພັດທະນາທີ່ອີງໃສ່ທ່າແຮງ ແລະ ຈຸດພິເສດ ຂອງປະເທດເຮົາ ເຊິ່ງພັກເຮົາເຄີຍໄດ້ຊີ້ນຳ ແລະ ນຳພາການພັນຂະຫຍາຍ ເຂົ້າໃນການພັດທະນາໂຄງປະກອບເສດຖະກິດ ຕາມຂະແໜງການ ຂອງປະເທດເຮົາ ໂດຍຖືເອົາກະສິກຳເປັນພື້ນຖານ ເພື່ອຂະຫຍາຍອຸດສາຫະກຳ, ຄົມມະນາຄົມ ເປັນປາຍແຫຼມ ແລະ ການຄ້າ ເປັນຕ່ອງໂສ້. ບົນພື້ນຖານດັ່ງກ່າວນັ້ນ, ສູນກາງພັກ ໄດ້ໃຫ້ທິດຊີ້ນຳ ການກຳນົດສ້າງຂະແໜງການທີ່ເປັນເສດຖະກິດປາຍແຫຼມ ເພື່ອເປັນບູລິມະສິດ ໃນການສ້າງຄວາມເຂັ້ມແຂງ ໃຫ້ແກ່ເສດຖະກິດແຫ່ງຊາດ ແລະ ການສ້າງລາຍຮັບເຂົ້າງົບປະມານ ໃນຊຸມປີຕໍ່ໜ້າ ຄື: ການຜະລິດກະສິກຳສະອາດ ແລະ ປຸງແຕ່ງຜະລິດຕະພັນກະສິກຳສົ່ງອອກ; ອຸດສາຫະກຳປຸງແຕ່ງແຮ່ທາດ; ອຸດສາຫະກຳຂົນສົ່ງ ແລະ ໂລຈິສຕິກ; ອຸດສາຫະກຳທ່ອງທ່ຽວ; ສ່ວນຂະແໜງການອື່ນໆ ເປັນຕົ້ນເສດຖະກິດດີຈີຕອນ, ການຄ້າ, ພະລັງງານໄຟຟ້າ ແມ່ນຂະແໜງບູລິມະສິດທີ່ຊ່ວຍໜູນ ໃຫ້ແກ່ຂະແໜງເສດຖະກິດປາຍແຫຼມ;

ມອບໃຫ້ລັດຖະບານ ສືບຕໍ່ຄົ້ນຄວ້າ, ວິເຄາະ, ວິໄຈ ໃຫ້ຈະແຈ້ງ, ຊັດເຈນ ແລະ ແທດກັບສະພາບຄວາມເປັນຈິງ ກໍ່ຄືຄວາມອາດສາມາດ ຂອງປະເທດເຮົາ ເພື່ອນຳມາລາຍງານ ຕໍ່ກົມການເມືອງ, ຄະນະເລຂາທິການສູນກາງພັກ ໃຫ້ທິດຊີ້ນຳ ແລະ ນຳໄປຜ່ານກອງປະຊຸມສູນກາງ ຮັບຮອງເອົາ.

**4. ກ່ຽວກັບການຊຸກຍູ້, ສົ່ງເສີມຜູ້ປະກອບການທຸລະກິດຂະໜາດນ້ອຍ, ຂະໜາດກາງ ແລະ ຈຸລະວິສາຫະກິດ ໃຫ້ມີຄວາມເຂັ້ມແຂງ.**

ກອງປະຊຸມ ໄດ້ຕີລາຄາສູງຕໍ່ຄວາມພະຍາຍາມ ຂອງລັດຖະບານ ແລະ ອົງການປົກຄອງທ້ອງຖິ່ນ ໃນການຈັດຕັ້ງປະຕິບັດທິດຊີ້ນຳ ຂອງກອງປະຊຸມຄົບຄະນະບໍລິຫານງານສູນກາງພັກ ຄັ້ງທີ 4 ສະໄໝທີ X ໄດ້ມີຜົນສຳເລັດໃນເບື້ອງຕົ້ນ, ສາມາດສ້າງໄດ້ຜູ້ປະກອບການຜະລິດ, ປຸງແຕ່ງ, ບໍລິການ ທີ່ນັບມື້ນັບຫຼາຍຂຶ້ນ, ສ້າງວຽກເຮັດງານທຳ, ສ້າງລາຍຮັບ ໃຫ້ແກ່ຜູ້ປະກອບການ ກໍ່ຄືປະຊາຊົນ ໄດ້ໃນລະດັບອັນແນ່ນອນ, ປະກອບສ່ວນສຳຄັນເຂົ້າໃນການພັດ

ທະນາເສດຖະກິດ-ສັງຄົມ, ພັດທະນາເຂດຕ່າງໄກສອກຫຼີກ ໃຫ້ຂະຫຍາຍຕົວກວ້າງອອກ, ປະຊາຊົນ ຮູ້ຈັກທຳມາຫາກິນ, ສ້າງຄວາມເຂັ້ມແຂງໃຫ້ກັບຄອບຄົວ, ກາຍເປັນກຳລັງແຮງທີ່ສຳຄັນ ໃນການແກ້ໄຂຄວາມທຸກຍາກ ຢູ່ປະເທດເຮົາ. ເຖິງຢ່າງໃດກໍ່ຕາມ ຖ້າທຽບໃສ່ແຜນພັດທະນາເສດຖະກິດ-ສັງຄົມ ແລະ ຄວາມອາດສາມາດຕົວຈິງ ເຫັນວ່າ ການຊຸກຍູ້, ສົ່ງເສີມທຸລະກິດຂະໜາດນ້ອຍ, ຂະໜາດກາງ ແລະ ຈຸລະວິສາຫະກິດ ບໍ່ທັນຂະຫຍາຍຕົວ ຢ່າງມີຈຸດສຸມ, ຄຸນນະພາບບໍ່ທັນສູງ, ຄວາມສາມາດແຂ່ງຂັນກັບຕະຫຼາດພາກພື້ນ ແລະ ສາກົນຫຼາຍດ້ານ ຍັງຈຳກັດ; ການເຂົ້າເຖິງແຫຼ່ງທຶນ ພົບຄວາມຫຍຸ້ງຍາກ; ກົນໄກການປະສານງານ ແລະ ການສະໜອງຂໍ້ມູນຂ່າວສານ, ການຄຸ້ມຄອງ ແລະ ວິທີການບໍລິການ ຂອງພາກລັດ ຕໍ່ການຊຸກຍູ້ສົ່ງເສີມພາກສ່ວນດັ່ງກ່າວ ຍັງບໍ່ທັນເປັນລະບົບ, ບໍ່ແຂງແຮງ ແລະ ຍັງບໍ່ໄລ່ລຽງ.

ກອງປະຊຸມ ໄດ້ຢືນຢັນທັດສະນະຊີ້ນຳ, ນະໂຍບາຍ ທີ່ມີຕໍ່ຫົວໜ່ວຍທຸລະກິດຂະໜາດນ້ອຍ, ຂະໜາດກາງ ແລະ ຈຸລະວິສາຫະກິດ ແມ່ນການສ້າງກຳລັງແຮງ ໃຫ້ແກ່ການຂະຫຍາຍພາກສ່ວນເສດຖະກິດ ໃນລະບົບເສດຖະກິດແຫ່ງຊາດ ເພື່ອສ້າງຄວາມຮັ່ງມີ ໃຫ້ແກ່ປະຊາຊົນ ແລະ ປະເທດຊາດ; ພັກ-ລັດຖະບານ ຍາມໃດກໍ່ຊຸກຍູ້ສົ່ງເສີມ ໃຫ້ຂະຫຍາຍພາກສ່ວນເສດຖະກິດຄອບຄົວ, ເອກະຊົນ, ເອກະເທດ ໃຫ້ນັບມື້ນັບເຕີບໃຫຍ່ ແລະ ຂະຫຍາຍຕົວກວ້າງຂວາງອອກ; ຕ້ອງຕີຖອຍທັດສະນະ, ຄວາມອະຄະຕິ ຕໍ່ຜູ້ປະກອບການ ຂະໜາດນ້ອຍ, ຂະໜາດກາງ ແລະ ຈຸລະວິສາຫະກິດ ດ້ວຍການຕັ້ງໜ້າແກ້ໄຂຂອດອ່ອນຊ້ຳເຮື້ອ ດ້ານກົນໄກ ຂອງລັດ, ປັບປຸງກົນໄກຄຸ້ມຄອງ, ນະໂຍບາຍ, ວິທີການ ແລະ ມາດຕະການ ກ່ຽວກັບການສົ່ງເສີມ ໂດຍພາກລັດ ແລະ ສະພາການຄ້າ-ອຸດສາຫະກຳ ແຕ່ລະຂັ້ນ ເປັນເຈົ້າການ ແລະ ເປັນໃຈກາງ ໃນການຊ່ວຍຫົວໜ່ວຍ ທີ່ຍັງບໍ່ທັນມີຄວາມເຂັ້ມແຂງ ແລະ ຊຸກຍູ້ການລວມຕົວກັນ ຂອງຫົວໜ່ວຍທຸລະກິດຂະໜາດນ້ອຍ, ຂະໜາດກາງ ແລະ ຈຸລະວິສາຫາກິດ ໃຫ້ເປັນກຸ່ມ ແລະ ມີການພົວພັນ, ຊ່ວຍໜູນ ເຊິ່ງກັນ ແລະ ກັນ ຢ່າງເປັນລະບົບ, ສາມາດເຂົ້າເຖິງແຫຼ່ງທຶນ, ຕະຫຼາດ, ເຕັກໂນໂລຊີ ແລະ ນະວັດຕະກຳໃໝ່; ສືບຕໍ່ຊີ້ນຳອົງການປົກຄອງແຕ່ລະຂັ້ນ ໃນການສ້າງຄວາມຮັບຮູ້, ເຂົ້າໃຈ ທີ່ຖືກຕ້ອງ ກ່ຽວກັບການດຳເນີນທຸລະກິດຂະໜາດນ້ອຍ, ຂະໜາດກາງ, ເສດຖະກິດຄອບຄົວ ເພື່ອບຸກທະລຸ ແລະ ສ້າງຄົນລາວ ໃຫ້ສາມາດເສີມຂະຫຍາຍຫົວຄິດປະດິດສ້າງ, ຄວາມດຸໝັ່ນຂະຫຍັນພຽນ ກາຍເປັນຜູ້ປະກອບການທຸລະກິດທີ່ເຂັ້ມແຂງ, ເປັນເຈົ້າຕົນເອງ ແລະ ສາມາດແຂ່ງຂັນ ທີ່ນັບມື້ນັບຫຼາຍຂຶ້ນ, ສ້າງຄວາມຮັ່ງມີ ໃຫ້ແກ່ຄອບຄົວ, ສັງຄົມ ແລະ ປະເທດຊາດ.

**5. ກ່ຽວກັບການເພີ່ມທະວີການພັດທະນາຊັບພະຍາກອນມະນຸດ ໃຫ້ມີຄຸນນະພາບສູງ.**

ພັກເຮົາ ຍາມໃດກໍ່ຖືສຳຄັນ ຕໍ່ການສ້າງ ແລະ ພັດທະນາຊັບພະຍາກອນມະນຸດ ເປັນໜ້າທີ່ສຳຄັນຕົ້ນຕໍ ໃນພາລະກິດປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ ກໍ່ຄືການບູລະນະລະບອບປະຊາທິປະໄຕ ປະຊາຊົນ ກ້າວຂຶ້ນສູ່ຈຸດໝາຍສັງຄົມນິຍົມ. ໃນໄລຍະຜ່ານມາ ພັກເຮົາ ໄດ້ວາງແນວທາງ, ແຜນນະໂຍບາຍ ກ່ຽວກັບການພັດທະນາຊັບພະຍາກອນມະນຸດ ເຊິ່ງໄດ້ຮັບການຈັດຕັ້ງພັນຂະຫຍາຍ ຢ່າງເປັນລະບົບ ໃນແຕ່ລະໄລຍະ ດ້ວຍການວາງຍຸດທະສາດ ແລະ ດຳເນີນການປະຕິຮູບລະບົບການສຶກສາແຫ່ງຊາດ ມີຜົນສຳເລັດ ເປັນກ້າວໆມາ. ພ້ອມກັນນັ້ນ ກອງປະຊຸມ ຍັງໄດ້ໃຫ້ຂໍ້ສັງເກດວ່າ ຊັບພະຍາກອນມະນຸດ ທີ່ພັກ-ລັດ ໄດ້ລົງທຶນກໍ່

ສ້າງ, ບໍາລຸງໃນໄລຍະຜ່ານມາ ແມ່ນມະຫາສານ ແຕ່ຄຸນນະພາບຍັງບໍ່ທັນສູງເທົ່າທີ່ຄວນ, ການກໍ່ສ້າງ ກັບການນໍາໃຊ້ຍັງບໍ່ທັນສົມຄູ່ ແລະ ບໍ່ທັນຕອບສະໜອງກັບສະພາບການພັດທະນາເສດຖະກິດ-ສັງຄົມ ກໍ່ຄືຄວາມຕ້ອງການຕົວຈິງ ຂອງຕະຫຼາດ; ກົນໄກການຄຸ້ມຄອງ, ນະໂຍບາຍ ຕໍ່ຜູ້ທີ່ມີຄວາມຮູ້, ຄວາມສາມາດ ຍັງບໍ່ທັນສອດຄ່ອງ ແລະ ແທດກັບຕົວຈິງ ພາໃຫ້ເກີດມີສະພາບເຫຼືອບໍ່ພໍ; ການສ້າງຄ່ານິຍົມ ຂອງສັງຄົມລາວ ໃນການຮຽນຮູ້, ການເຮັດວຽກ, ການປະກອບອາຊີບ ຍັງບໍ່ທັນຖືກຕາມທິດເສີມຂະຫຍາຍຄວາມເປັນເຈົ້າຕົນເອງ, ກຸ້ມຕົນເອງ ແລະ ສ້າງຄວາມເຂັ້ມແຂງ ດ້ວຍຕົນເອງ.

ຄະນະບໍລິຫານງານສູນກາງພັກ ຊີ້ນໍາໃຫ້ລັດຖະບານ ສືບຕໍ່ທົບທວນຍຸດທະສາດ, ນະໂຍບາຍ ກ່ຽວກັບການກໍ່ສ້າງຊັບພະຍາກອນມະນຸດ ໂດຍສະເພາະແມ່ນນະໂຍບາຍ ແລະ ບູລິມະສິດ ຕໍ່ຄົນເກັ່ງ, ຄົນທີ່ມີພອນສະຫວັນ, ຄວາມຮູ້, ຄວາມສາມາດສະເພາະດ້ານ ແລະ ມີຄວາມຈົງຮັກພັກດີ ເພື່ອນໍາໃຊ້ເຂົ້າໃນກົງຈັກການຈັດຕັ້ງ ແລະ ເປັນກໍາລັງຫຼັກແຫຼ່ງ ເຂົ້າຢູ່ໃນພາກສ່ວນຕ່າງໆຂອງສັງຄົມ ໂດຍສະເພາະແມ່ນເລັ່ງໃສ່ສ້າງແຮງງານ, ສ້າງຊາວໜຸ່ມ ທີ່ມີສັກກະຍະພາບ ໃນທຸກຂະແໜງວິຊາຊີບ ໃຫ້ນັບມື້ນັບຫຼາຍຂຶ້ນ; ຊຸກຍູ້ສົ່ງເສີມສ້າງຄ່ານິຍົມ ໃຫ້ຄົນໃນສັງຄົມ ໂດຍສະເພາະ ຄົນຮຸ່ນໜຸ່ມ ໃຫ້ຮັກການອອກແຮງງານ, ປະກອບອາຊີບ ແລະ ມີວຽກເຮັດງານທໍາ ຂອງຕົນເອງ ທີ່ໝັ້ນຄົງ ເພື່ອປະກອບສ່ວນ ໃນການພັດທະນາປະເທດຊາດ.

ມອບໃຫ້ລັດຖະບານ ສືບຕໍ່ຊີ້ນໍາພາກສ່ວນກ່ຽວຂ້ອງ ປັບປຸງເອກະສານ ແລະ ສ້າງເປັນມະຕິ ຂອງຄະນະບໍລິຫານງານສູນກາງພັກ ວ່າດ້ວຍການພັດທະນາຊັບພະຍາກອນມະນຸດທີ່ມີຄຸນນະພາບ ຕອບສະໜອງໃຫ້ແກ່ການພັດທະນາໃນເງື່ອນໄຂໃໝ່ ໂດຍສືບຕໍ່ຍຶດໝັ້ນ ແລະ ເສີມຂະຫຍາຍທິດຊີ້ນໍາຂອງພັກ ກ່ຽວກັບການພັດທະນາຊັບພະຍາກອນມະນຸດ ຢູ່ປະເທດເຮົາ ຕາມມະຕິກອງປະຊຸມຄົບຄະນະບໍລິຫານງານສູນກາງພັກ ຄັ້ງທີ 7 ສະໄໝທີ V ໂດຍມີການແບ່ງໜ້າທີ່ຄວາມຮັບຜິດຊອບ ໃຫ້ແຕ່ລະຂະແໜງການ, ອົງການທີ່ກ່ຽວຂ້ອງ ຢ່າງຈະແຈ້ງ, ມີການຕິດຕາມ, ກວດກາ, ປະເມີນຜົນ ເປັນປົກກະຕິ ຢ່າງໜ້ອຍປີລະເທື່ອ.

**6. ກ່ຽວກັບການປັບປຸງລະບົບການຈັດຕັ້ງ, ກົງຈັກ ແລະ ກົນໄກການເຄື່ອນໄຫວ ຂອງອົງການບໍລິຫານລັດ ຕາມທິດເຂັ້ມແຂງ ແລະ ມີປະສິດທິພາບ.**

ກອງປະຊຸມສູນກາງພັກຄັ້ງນີ້ ໄດ້ລົງເລິກຕີລາຄາວ່າ ການຈັດຕັ້ງປະຕິບັດທິດນໍາ, ນະໂຍບາຍ ແລະ ນິຕິກໍາຕ່າງໆ ໃນການປັບປຸງກົງຈັກການຈັດຕັ້ງ, ການປັບປຸງ, ບູລະນະ, ສັບຊ້ອນ, ຍຸບ-ໂຮມ ຈໍານວນໜຶ່ງ ໄປຖືກຕາມທິດ ກະທັດຮັດ, ສົມເຫດສົມຜົນ. ແຕ່ກໍ່ເຫັນວ່າ ກົງຈັກຍັງໃຫຍ່ໂຕ, ຈໍານວນພະນັກງານ ຍັງບໍ່ທັນດຸ່ນດ່ຽງ ລະຫວ່າງສູນກາງກັບທ້ອງຖິ່ນ ແລະ ລະຫວ່າງຂະແໜງການດ້ວຍກັນ ກໍ່ຄືໃນແຕ່ລະຂົງເຂດວຽກງານ, ກົງຈັກການຈັດຕັ້ງຫຼຸດລົງ ແຕ່ຈໍານວນພະນັກງານ-ລັດຖະກອນ ຍັງຫຼາຍ ແລະ ສິ້ນເປືອງງົບປະມານບໍລິຫານ ບໍ່ໜ້ອຍ; ປະສິດທິຜົນໃນການເຄື່ອນໄຫວວຽກງານຂອງກົງຈັກ ແລະ ພະນັກງານ ຍັງບໍ່ທັນສູງ, ບໍ່ຫ້າວຫັນ, ປະກົດການອາດຍາສິດ, ອືດອາດຊັກຊ້າ ໃນການບໍລິການປະຊາຊົນ ຍັງແຜ່ຫຼາຍ, ການບໍລິຫານຄຸ້ມຄອງ ຂອງລັດ ຕາມກົດໝາຍ ຍັງບໍ່ທັນເຂັ້ມງວດ, ຫຼາຍດ້ານ ຍັງມີຊ່ອງຫວ່າງ ໃຫ້ແກ່ການສວຍໂອກາດ ໄປໃນທາງທີ່ບໍ່ຖືກຕ້ອງ.

ສູນກາງພັກ ໄດ້ໃຫ້ທັດສະນະວ່າ: ການປັບປຸງກົງຈັກການຈັດຕັ້ງ ຕ້ອງຮັບປະກັນລັກສະນະວິທະຍາສາດ, ມີການເໜັງຕີງ ຕາມສະພາບຄວາມເປັນຈິງ ແລະ ຕາມຄວາມຮຽກຮ້ອງຕ້ອງການ ຂອງໜ້າທີ່ການເມືອງໃນແຕ່ລະໄລຍະ, ບໍ່ກົນຈັກຕາຍຕົວ, ແຂງກະດ້າງ ແຕ່ກໍ່ບໍ່ໝາຍຄວາມວ່າ ຈະຕ້ອງມີການປັບປຸງປ່ຽນແປງເລື້ອຍໆ. ການປັບປຸງການຈັດຕັ້ງ, ກົງຈັກຍັງຕ້ອງຮັບປະກັນລັກສະນະພາວະວິໄສ, ເພາະໃນແຕ່ລະໄລຍະຖ້າບໍ່ມີການປັບປຸງ, ສັບຊ້ອນ ກໍ່ບໍ່ສາມາດເຄື່ອນໄຫວວຽກງານຢ່າງມີປະສິດທິພາບ, ບໍ່ສາມາດຊອກໃຫ້ເຫັນ ຄວາມອາດສາມາດ ແລະ ຄວາມສອດຄ່ອງ ຂອງການຈັດຕັ້ງປະຕິບັດວຽກງານ, ສ່ອງແສງໃຫ້ເຫັນທາດແທ້ ແລະ ລັກສະນະ ຂອງລັດປະຊາທິປະໄຕປະຊາຊົນ ທີ່ມາຈາກປະຊາຊົນ ໂດຍປະຊາຊົນ ແລະ ເພື່ອປະຊາຊົນ ຢ່າງແທ້ຈິງ.

ໃນຕໍ່ໜ້າ, ຄະນະບໍລິຫານງານສູນກາງພັກ ເຫັນດີໃຫ້ສືບຕໍ່ປັບປຸງການຈັດຕັ້ງ, ກົງຈັກ ແລະ ກົນໄກການເຄື່ອນໄຫວ ຂອງບັນດາອົງການອຳນາດລັດ, ອົງການພັກ, ແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າ ແລະ ອົງການຈັດຕັ້ງມະຫາຊົນ ແຕ່ລະຂັ້ນ ໃຫ້ມີຄວາມໜັກແໜ້ນ, ເຂັ້ມແຂງ, ກະທັດຮັດ ແລະ ມີຄວາມຄ່ອງຕົວ ຕາມມະຕິກອງປະຊຸມໃຫຍ່ ຄັ້ງທີ XI ຂອງພັກ ວາງອອກ ໂດຍສຸມໃສ່ບັນຫາຈຳນວນໜຶ່ງ ຄື: ຍົກສູງຄຸນນະພາບບໍລິການປະຊາຊົນ ຢູ່ຂັ້ນພື້ນຖານ, ແກ້ໄຂພະຍາດອາດຍາສິດ ໃນກົງຈັກການຈັດຕັ້ງແຕ່ລະຂັ້ນ; ສືບຕໍ່ປັບປຸງກົນໄກການປະສານສົມທົບ, ການປະສານງານ ລະຫວ່າງອົງການອຳນາດລັດໃຫ້ມີຄວາມຄ່ອງຕົວ, ໄລ່ລຽງ ແລະ ບໍ່ກ້າວກ່າຍກັນ; ສືບຕໍ່ແບ່ງຂັ້ນຄຸ້ມຄອງ ລະຫວ່າງສູນກາງ-ທ້ອງຖິ່ນ ໃຫ້ຈະແຈ້ງ ແລະ ຂາດຕົວ, ຫັນເປັນທັນສະໄໝ ໃນຄຸ້ມຄອງບໍລິຫານຂອງລັດ; ສືບຕໍ່ຄົ້ນຄວ້າຫຼຸດຜ່ອນຈຳນວນລັດຖະກອນ ລົງເປັນກ້າວໆ ດ້ວຍມາດຕະການຕ່າງໆ ທີ່ເໝາະສົມ, ພ້ອມກັນນັ້ນ ກໍ່ປະຕິບັດນິຕິກຳ, ກົດໝາຍ ກ່ຽວກັບການຄຸ້ມຄອງ, ນຳໃຊ້, ການປະຕິບັດນະໂຍບາຍ ຕໍ່ພະນັກງານ; ປັບປຸງຫົວໜ່ວຍວິຊາການທີ່ມີເງື່ອນໄຂ ເພື່ອຫັນໄປສູ່ການກຸ້ມຕົນເອງທາງດ້ານງົບປະມານ-ການເງິນ ໃຫ້ໄວຕື່ມ ຕິດພັນກັບການຄົ້ນຄວ້າລະບົບພະລາກອນ ຢູ່ກົງຈັກ ຂອງພັກ-ລັດ ແຕ່ລະຂັ້ນ; ມອບໃຫ້ລັດຖະບານ ຄົ້ນຄວ້າການປັບປຸງກົງຈັກການຈັດຕັ້ງ ຂັ້ນກົມໃຫຍ່ ຢູ່ກຳລັງ ປກຊ-ປກສ ໂດຍເນັ້ນໃສ່ການຍົກສູງປະສິດທິພາບຂອງວຽກງານຕາມທິດກະທັດຮັດ. ພ້ອມກັນນັ້ນ ກໍ່ສືບຕໍ່ຄົ້ນຄວ້າ, ສຳມະນາ ບັນຫາລະບົບການປົກຄອງ ຢູ່ທ້ອງຖິ່ນ ເປັນຕົ້ນ: ບັນຫາກຸ່ມບ້ານ ໃນເຂດຊົນນະບົດຫ່າງໄກສອກຫຼີກ, ບັນຫາການຄອບຕຳແໜ່ງ ຂອງການນຳຂັ້ນທ້ອງຖິ່ນ, ການສັບຊ້ອນ, ຈັດວາງ ພະນັກງານນຳພາຄຸ້ມຄອງ ທີ່ບໍ່ຖືເອົາຖິ່ນກຳເນີດ ເປັນເງື່ອນໄຂ ເພື່ອໄປປະຈຳການ ຢູ່ທ້ອງຖິ່ນນັ້ນໆ.

**7. ຄະນະບໍລິຫານງານສູນກາງພັກ ໄດ້ຄົ້ນຄວ້າ, ປຶກສາຫາລື ແລະ ໃຫ້ທິດຊີ້ນຳເບື້ອງຕົ້ນ ກ່ຽວກັບການຄົ້ນຄວ້າທິດສະດີ ແລະ ສະຫຼຸບພຶດຕິກຳ ໃຫ້ແກ່ການສ້າງປະຖົມປັດໃຈ ເພື່ອກ້າວຂຶ້ນສູ່ຈຸດໝາຍສັງຄົມນິຍົມ,** ຖືເປັນບັນຫາພື້ນຖານ ທີ່ມີລັກສະນະຍຸດທະສາດຍາວນານ ເພື່ອສືບຕໍ່ບູລະນະ ແລະ ເພີ່ມເຕີມເສີມຂະຫຍາຍແນວທາງປ່ຽນແປງໃໝ່ ຂອງພັກເຮົາ; ການຄົ້ນຄວ້າບັນຫາດັ່ງກ່າວ ເປັນບາດກ້າວໃໝ່ ດ້ານທິດສະດີ ແລະພຶດຕິກຳ ໃຫ້ແກ່ການບູລະນະລະບອບປະຊາທິປະໄຕປະຊາຊົນ ຢູ່ປະເທດເຮົາ ຈະແຈ້ງ, ຄົບຖ້ວນ ແລະ ສົມບູນ ຂຶ້ນຕື່ມ. ສູນກາງພັກ ຢືນຢັນວ່າ ໄລຍະຂອງການປະຕິວັດເຮົາ ຍັງແມ່ນໄລຍະຂ້າມຜ່ານ, ຈຸດສຸມໃນຊຸມປີຕໍ່

ໜ້າ ແມ່ນສູ້ຊົນເພື່ອນຳພາປະເທດຊາດ ຫຼຸດພົ້ນຈາກສະຖານະພາບດ້ອຍພັດທະນາ ເພື່ອສືບຕໍ່ສ້າງປະກົນປັດໃຈ ແລະ ສ້າງເງື່ອນໄຂ ໃຫ້ແກ່ການກ້າວເດີນສູ່ຈຸດໝາຍສັງຄົມນິຍົມ, ເຊິ່ງແມ່ນອຸດົມການ ແລະ ທາດແທ້ປະຕິວັດ ຂອງພັກເຮົາ, ທັງແມ່ນຄວາມມຸ່ງມາດປາດຖະໜາອັນແຮງກ້າ ຂອງປະຊາຊົນລາວບັນດາເຜົ່າ ທີ່ຕ້ອງຢຶດໝັ້ນ ຢ່າງສະເໝີຕົ້ນສະເໝີປາຍ.

ຄະນະບໍລິຫານງານສູນກາງພັກ ເຫັນດີມອບໃຫ້ສະພາທິດສະດີສູນກາງພັກ ສົມທົບກັບພາກສ່ວນກ່ຽວຂ້ອງ ສືບຕໍ່ລົງເລິກ ຄົ້ນຄວ້າ, ວິໃຈ ແລະ ປັບປຸງ ເນື້ອໃນເອກະສານ ໃຫ້ຄົບຖ້ວນ, ຈະແຈ້ງ ແລະ ມີພື້ນຖານທາງດ້ານວິທະຍາສາດກວ່າເກົ່າ ເພື່ອເປັນບ່ອນອີງໃຫ້ແກ່ການສ້າງໂຄງການການເມືອງ ຂອງພັກເຮົາ; ໃຫ້ຮີບຮ້ອນຄົ້ນຄວ້າ, ສ້າງໂຄງຮ່າງ ຂອງໂຄງການການເມືອງ ເພື່ອນຳສະເໜີຂໍທິດຊີ້ນຳ ຈາກກົມການເມືອງ, ຄະນະເລຂາທິການສູນກາງພັກ ໂດຍມີການແຕ່ງຕັ້ງຄະນະຮັບຜິດຊອບກະກຽມໂຄງການດັ່ງກ່າວ ໃຫ້ສຳເລັດເປັນຮ່າງເບື້ອງຕົ້ນ ແລະ ໃຫ້ນຳມາຜ່ານກອງປະຊຸມຄົບຄະນະບໍລິຫານງານສູນກາງພັກ ໃນທ້າຍປີ 2023 ເພື່ອສືບຕໍ່ພິຈາລະນາ ໃຫ້ທິດຊີ້ນຳຕື່ມ, ຈາກນັ້ນ ກະກຽມຄວາມພ້ອມ ແລະ ນຳສະເໜີຕໍ່ກອງປະຊຸມໃຫຍ່ ຄັ້ງທີ XII ຂອງພັກ ພິຈາລະນາຮັບຮອງເອົາ.

**8. ຄະນະບໍລິຫານງານສູນກາງພັກ ໄດ້ປຶກສາຫາລື ແລະ ໃຫ້ທິດຊີ້ນຳ ກ່ຽວກັບການກະກຽມການດຳເນີນ ກອງປະຊຸມວຽກງານການເມືອງແນວຄິດທົ່ວປະເທດ ຄັ້ງທີ V, ກອງປະຊຸມວຽກງານກໍ່ສ້າງຮາກຖານການເມືອງ, ວຽກງານພັດທະນາຊົນນະບົດ, ແກ້ໄຂຄວາມທຸກຍາກ ແລະ ວຽກງານສາມສ້າງ, ກອງປະຊຸມສະຫຼຸບຂະບວນການແຂ່ງຂັນ ຮັກຊາດ ແລະ ພັດທະນາ**, ເຊິ່ງລ້ວນແຕ່ແມ່ນວຽກງານສຳຄັນ ໃນການສືບຕໍ່ປັບປຸງ, ຍົກລະດັບຄຸນນະພາບການປັບປຸງກໍ່ສ້າງພັກ ທາງດ້ານການເມືອງແນວຄິດ ກໍ່ຄືການນຳພາ, ປຸກລະດົມທົ່ວສັງຄົມ ເຂົ້າຮ່ວມພາລະກິດປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ ໃນໄລຍະໃໝ່; ການປັບປຸງກໍ່ສ້າງລະບົບການເມືອງປະຊາທິປະໄຕປະຊາຊົນ ຢູ່ຮາກຖານ ໃຫ້ມີຄວາມໝັກແໜ້ນ, ເຂັ້ມແຂງ ຕິດພັນກັບການຍູ້ຂະບວນການແຂ່ງຂັນຮັກຊາດ ແລະ ພັດທະນາ, ສ້າງຄວາມເຂັ້ມແຂງໃຫ້ແກ່ລະບອບປະຊາທິປະໄຕປະຊາຊົນ ແຕ່ຮາກຖານຂຶ້ນມາ.

ກອງປະຊຸມ, ໃນດ້ານຫຼັກການ ແລະ ພື້ນຖານ ແມ່ນເຫັນດີຕໍ່ການກະກຽມເນື້ອໃນ ຂອງຄະນະຮັບຜິດຊອບກະກຽມກອງປະຊຸມດັ່ງກ່າວ, ມອບໃຫ້ສືບຕໍ່ຄົ້ນຄວ້າປັບປຸງແຕ່ລະເນື້ອໃນຂອງເອກະສານ ໃຫ້ລະອຽດ, ຮັດກຸມ ສ່ອງແສງໃຫ້ເຫັນຢ່າງຈະແຈ້ງ ເຖິງສະພາບຄວາມເປັນຈິງທາງດ້ານແນວຄິດ ຂອງສະມາຊິກພັກ, ພະນັກງານ, ທະຫານ, ຕຳຫຼວດ ແລະ ປະຊາຊົນບັນດາເຜົ່າ; ສະພາບການເຮັດວຽກງານການເມືອງ-ແນວຄິດ ຂອງອົງການກ່ຽວຂ້ອງ ແລະ ຄະນະນຳທຸກຂັ້ນ, ການປັບປຸງຮາກຖານການເມືອງ ຂອງລະບອບປະຊາທິປະໄຕປະຊາຊົນ ໃນເງື່ອນໄຂ ຂອງການພັດທະນາໃນໄລຍະໃໝ່, ການຍູ້ແຮງຂະບວນການແຂ່ງຂັນຮັກຊາດ ແລະ ພັດທະນາ ເພື່ອຊອກໃຫ້ເຫັນກົນກອງ, ຄົນດີ, ຄົນເກັ່ງ, ຕົວແບບໃນການຄົ້ນຄິດ, ປະດິດຄິດສ້າງ, ພັດທະນາສິ່ງໃໝ່ໆ ອອກຮັບໃຊ້ສັງຄົມ ໂດຍມີການຈັດຕັ້ງສຳມະນາວິທະຍາສາດ ໃຫ້ກວ້າງຂວາງ ແລະ ເລິກເຊິ່ງ ເພື່ອສືບຕໍ່ກຳນົດແນວທາງການຈັດຕັ້ງ ທີ່ຖືກຕ້ອງ, ສອດຄ່ອງ ແລະ ຈັດຕັ້ງປະຕິບັດວຽກງານຍຸດທະສາດສຳຄັນດັ່ງກ່າວ ໃຫ້ເຂົ້າສູ່ລວງເລິກ ແລະ ມີປະສິດທິຜົນສູງ ໃນຊຸມປີຕໍ່ໜ້າ ກໍ່ຄືໄລຍະຍາວນານ.

9. ຄະນະບໍລິຫານງານສູນກາງພັກ ໄດ້ວາງວຽກງານຈຸດສຸມ ໃນການນຳພາຊີ້ນຳ ຂອງຕົນ ແຕ່ນີ້ຫາກອງປະຊຸມຄົບຄະນະບໍລິຫານງານສູນກາງພັກ ຄັ້ງທີ 5 ສະໄໝທີ XI ດັ່ງນີ້:

- ຊີ້ນຳການພັນລະນາຂະຫຍາຍ ເນື້ອໃນຈິດໃຈ ຂອງກອງປະຊຸມຄັ້ງນີ້ ເຂົ້າສູ່ວຽກງານຕົວຈິງ ໂດຍສ້າງໃຫ້ເປັນແຜນປະຕິບັດງານ ທີ່ລະອຽດ, ຈະແຈ້ງ ແລະ ມີຄວາມສາມາດຈັດຕັ້ງປະຕິບັດໃຫ້ເປັນຈິງ;

- ຊີ້ນຳການກະກຽມ ແລະ ດຳເນີນກອງປະຊຸມສາມັນ ເທື່ອທີ 3 ຂອງສະພາແຫ່ງຊາດ ຊຸດທີ IX;

- ສືບຕໍ່ຊີ້ນຳ ການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານ ແຜນເງິນຕາ ໃນ 6 ເດືອນທ້າຍປີ 2022 ຕິດພັນກັບ 2 ວາລະແຫ່ງຊາດ ໃຫ້ແຂງແຮງ ແລະ ມີລັກສະນະບຸກທະລຸກວ່າເກົ່າ, ສາມາດຮັບມື ແລະ ແກ້ໄຂບັນຫາຕົວຈິງ ຢ່າງຄ່ອງແຄ້ວ ແລະ ມີປະສິດທິຜົນກວ່າເກົ່າ;

- ສຸມໃສ່ຊີ້ນຳແກ້ໄຂຄວາມເຄັ່ງຮ້ອນ, ບັນຫາອ່ອນໄຫວ ທີ່ກະທົບໂດຍກົງ ຕໍ່ຊີວິດການເປັນຢູ່ ຂອງປະຊາຊົນ ໃນປະຈຸບັນ ເປັນຕົ້ນແມ່ນບັນຫາອັດຕາແລກປ່ຽນ, ເງິນເຟີ້, ການຂາດແຄນນໍ້າມັນເຊື້ອໄຟ, ບັນຫາຄ່າຄອງຊີບສູງ, ການຊໍາລະໜີ້ສິນຕ່າງປະເທດ ແລະ ອື່ນໆ ໂດຍນຳໃຊ້ທຸກມາດຕະການ, ນະໂຍບາຍທີ່ເໝາະສົມ ເພື່ອແກ້ໄຂບັນຫາຫຍຸ້ງຍາກຕ່າງໆ;

- ຊີ້ນຳການທົບທວນ ແລະ ປະເມີນຄືນ ການຈັດຕັ້ງປະຕິບັດມະຕິກອງປະຊຸມໃຫຍ່ ຂອງຮາກຖານພັກ ກໍ່ຄືກອງປະຊຸມໃຫຍ່ ຂອງອົງຄະນະພັກເມືອງ ໄລຍະກາງສະໄໝ ເພື່ອເປັນພື້ນຖານການຕີລາຄາຕໍ່ຄວາມສາມາດນຳພາ ແລະ ຄວາມເປັນແບບຢ່າງນຳໜ້າ ຂອງຄະນະພັກແຕ່ລະຂັ້ນ;

- ນຳພາການກະກຽມດຳເນີນຊີວິດການເມືອງ ປະຈຳປີ ຕິດພັນກັບການປັບປຸງປົວແປງພັກ, ສ້າງໜ່ວຍພັກ ປອດໃສ, ເຂັ້ມແຂງ ແລະ ໜັກແໜ້ນ ຢູ່ບັນດາອົງຄະນະພັກ ກະຊວງ, ອົງການ ແລະ ທ້ອງຖິ່ນ ໃຫ້ມີປະສິດທິພາບ;

- ສືບຕໍ່ຕິດຕາມ, ກຳສະພາບການພັນແປ ຂອງພາກພື້ນ ແລະ ສາກົນ ເພື່ອນຳພາແນວຄິດ ກໍ່ຄືວາງແຜນຮັບມືຜົນກະທົບແຕ່ຫົວທີ; ຕັ້ງໜ້າເຄື່ອນໄຫວວຽກງານຕ່າງປະເທດ, ການເຂົ້າຮ່ວມຂະບວນການເຊື່ອມຈອດ-ເຊື່ອມໂຍງ ກັບພາກພື້ນ ແລະ ສາກົນ ຢ່າງເປັນເຈົ້າການ ແລະ ຢູ່ໃນທ່າບຸກ;

- ຊີ້ນຳການສະເຫຼີມສະຫຼອງປີສາມັກຄີມິດຕະພາບ ລາວ-ຫວຽດນາມ ໃຫ້ມີເນື້ອໃນເລິກເຊິ່ງ ແລະ ເປັນຂະບວນການຟົດຟື້ນ;

- ນຳພາການກະກຽມກອງປະຊຸມຄົບຄະນະບໍລິຫານງານສູນກາງພັກ ຄັ້ງທີ 5 ສະໄໝທີ XI ຕິດພັນກັບການດຳເນີນຊີວິດການເມືອງ ປະຈຳປີ 2022 ພາຍໃນຄະນະບໍລິຫານງານສູນກາງພັກ; ຄະນະບໍລິຫານງານສູນກາງພັກ ມອບໃຫ້ກົມການເມືອງສູນກາງພັກ, ຄະນະເລຂາທິການສູນກາງພັກ ເປັນຜູ້ຊີ້ນຳການກະກຽມກອງປະຊຸມສູນກາງພັກ, ພ້ອມກັນນັ້ນ ກໍ່ຕິດຕາມ, ຊຸກຍູ້, ຊີ້ນຳ ການຈັດຕັ້ງປະຕິບັດ ມະຕິກອງປະຊຸມໃຫຍ່ ຄັ້ງທີ XI ຂອງພັກ ເພື່ອສ້າງການຫັນປ່ຽນທີ່ແຂງແຮງ, ເລິກເຊິ່ງ ແລະ ຮອບດ້ານ ໃນທຸກຂົງເຂດວຽກງານ;

10. ຄະນະບໍລິຫານງານສູນກາງພັກ ເຫັນວ່າເພື່ອຍົກສູງຄວາມເປັນເຈົ້າການ ຍູ້ຂະບວນຈັດຕັ້ງຜັນຂະຫຍາຍມະຕິກອງປະຊຸມໃຫຍ່ ຄັ້ງທີ XI ຂອງພັກ ເຂົ້າສູ່ວຽກງານຕົວຈິງ ແລະ ມີຜົນສໍາເລັດ, ຄະນະພັກແຕ່ລະຂັ້ນ ຕ້ອງຍົກສູງຄວາມສາມາດນໍາພາ ແລະ ຄວາມເປັນແບບຢ່າງນໍາໜ້າ ຕໍ່ການແກ້ໄຂບັນຫາຕົວຈິງ ໃນເງື່ອນໄຂສະພາບການຫຍຸ້ງຍາກສັບສົນຄືໃນປະຈຸບັນ ເພື່ອສືບຕໍ່ສ້າງຄວາມເຊື່ອໝັ້ນ ແລະ ສັດທາ ຂອງປະຊາຊົນ ທີ່ມີຕໍ່ການນໍາພາຄຸ້ມຄອງ ຂອງພັກ-ລັດ; ຮຽກຮ້ອງໃຫ້ຄະນະພັກ, ສະມາຊິກພັກ, ພະນັກງານ ເພີ່ມທະວີຄວາມສາມັກຄີເປັນຈິດໜຶ່ງໃຈດຽວ, ເສີມຂະຫຍາຍສະຕິຊາດ, ເປັນເຈົ້າຕົນເອງ, ມີຄວາມຕັດສິນໃຈເປັນເອກະພາບ ໃນທົ່ວພັກ, ທົ່ວລັດ, ທົ່ວກໍາລັງປະກອບອາວຸດ ແລະ ທົ່ວປວງຊົນລາວ, ສູ້ຊົນອົດທົນ, ຍົກສູງນໍ້າໃຈເສຍສະຫຼະ ເດັດດ່ຽວຜ່ານຜ່າອຸປະສັກ ແລະ ຄວາມຫຍຸ້ງຍາກຕ່າງໆ, ສ້າງພື້ນຖານ ແລະ ກ່ອງທ່າ ໃຫ້ແກ່ການສືບຕໍ່ພັດທະນາສ້າງສາປະເທດຊາດ ກ້າວຂຶ້ນຢ່າງບໍ່ຢຸດຢັ້ງ.

ນະຄອນຫຼວງວຽງຈັນ, ວັນທີ23 ມິຖຸນາ 2022

ຕ. ຄະນະບໍລິຫານງານສູນກາງພັກ

ເລຂາທິການໃຫຍ່

ທອງລຸນ ສີສຸລິດ